ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໍ໐໐໐໐ໍ

ກະຊວງ ໄປສະນີ,

ໂທລະຄົມມະນາຄົມ ແລະການສື່ສານ

ເລກທີ 1247 /ປທສ.

ນະຄອນຫລວງວຽງຈັນ, ວັນທີ 16 MAY 2014

# ຂໍ້ກຳນົດ
# ວ່າດ້ວຍ ການຄຸ້ມຄອງ ຊິມກາດໂທລະສັບແບບຕື່ມເງິນ

- ອີງຕາມກົດໝາຍ ວ່າດ້ວຍ ການໂທລະຄົມມະນາຄົມ, ສະບັບເລກທີ 09/ສພຊ, ລົງວັນ 21/12/2011;
- ອີງຕາມດຳລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະການເຄື່ອນໄຫວ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ, ສະບັບເລກທີ 303/ນຍ, ລົງວັນທີ 26/09/2011;
- ອີງຕາມແຈ້ງການ ຂອງ ຫ້ອງວ່າການລັດຖະບານ ວ່າດ້ວຍ ການອະນຸມັດອອກຂໍ້ບັງຄັບຂຶ້ນທະບຽນຜູ້ຊົມໃຊ້ໂທລະສັບມືຖືທົ່ວປະເທດ, ສະບັບເລກທີ 366/ຫລບ, ລົງວັນທີ 6/09/2011.

**ລັດຖະມົນຕີວ່າການ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ອອກຂໍ້ກຳນົດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ກຳນົດສະບັບນີ້ ກຳນົດລະບຽບການ ແລະມາດຕະການ ກ່ຽວກັບ ການຄຸ້ມຄອງ ຊິມກາດໂທລະສັບແບບຕື່ມເງິນ ຂອງ ວິສາຫະກິດໃຫ້ບໍລິການໂທລະຄົມມະນາຄົມ ເພື່ອເຮັດໃຫ້ການຂຶ້ນທະບຽນຜູ້ນຳໃຊ້ຊິມກາດໂທລະສັບແບບຕື່ມເງິນ ມີຄວາມຖືກຕ້ອງ, ມີຂໍ້ມູນຊັດເຈນ ແລະສາມາດຕິດຕາມ ກວດກາໄດ້ ແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະປອດໄພ.

**ມາດຕາ 2. ການອະທິບາຍຄຳສັບ**

1. ຊິມກາດ ໝາຍເຖິງ ແຜ່ນວົງຈອນເອເລັກໂຕຣນິກ ທີ່ບັນຈຸຂໍ້ມູນກ່ຽວກັບເລກໝາຍໂທລະສັບ, ເຄືອຂ່າຍເລກໝາຍໂທລະສັບ ຂອງຜູ້ນຳໃຊ້ໂທລະສັບມືຖື, ໂທລະສັບຕັ້ງໂຕະບໍ່ໃຊ້ສາຍ ແລະອຸປະກອນສື່ສານອື່ນ;
2. ຊິມກາດໂທລະສັບແບບຕື່ມເງິນ ໝາຍເຖິງ ຊິມກາດ ຂອງ ໂທລະສັບມືຖື, ໂທລະສັບຕັ້ງໂຕະແບບບໍ່ໃຊ້ສາຍ ແລະອຸປະກອນສື່ສານອື່ນ ເປັນຕົ້ນ ແອຣກາດ, ສະມາດໂຟນ ແລະແທັບບະເລັທ ແບບບໍ່ເສຍຄ່າເຊົ່າລາຍເດືອນ;

3. ຜູ້ຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ ໝາຍເຖິງ ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ, ສາຂາບໍລິສັດຂອງຕົນ ແລະບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຖືກຕ້ອງ ເປັນຕົວແທນຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ ຂອງ ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມໃດໜຶ່ງ ເພື່ອຈຳໜ່າຍໃຫ້ແກ່ຜູ້ນຳໃຊ້;
4. ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໝາຍເຖິງ ວິສາຫະກິດທີ່ໄດ້ຮັບອະນຸຍາດໃຫ້ບໍລິການໂທລະຄົມມະນາຄົມ;
5. ຕົວແທນຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນຄູ່ສັນຍາ ກັບບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະສາຂາບໍລິສັດນັ້ນ ເພື່ອຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ ໃຫ້ແກ່ຜູ້ນຳໃຊ້.

**ມາດຕາ 3. ການຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ**

ຜູ້ທີ່ມີສິດຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ ມີດັ່ງນີ້:

1. ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະສາຂາບໍລິສັດຂອງຕົນ;
2. ຕົວແທນຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ.

**ມາດຕາ 4. ຂໍ້ມູນຂອງຜູ້ນຳໃຊ້**

ຂໍ້ມູນຂອງຜູ້ນຳໃຊ້ ປະກອບດ້ວຍ ຊື່, ນາມສະກຸນ, ວັນເດືອນປີເກີດ, ອາຊີບ, ທີ່ຢູ່ປະຈຸບັນທີ່ຄົບຖ້ວນ.

**ມາດຕາ 5. ການສະໜອງຂໍ້ມູນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງຢາກຮູ້ ຂໍ້ມູນ ຂອງຜູ້ນຳໃຊ້ ແລະການນຳໃຊ້ ເລກໝາຍໂທລະສັບແບບຕື່ມເງິນ ຫຼື ໂທລະສັບລະບົບອື່ນ ຕ້ອງເຮັດໜັງສືສະເໜີ ເປັນລາຍລັກອັກສອນເຖິງ ຄະນະນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ໂດຍກົງ.

**ມາດຕາ 6. ຂອບເຂດການນຳໃຊ້**

ຂໍ້ກຳນົດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ຫຼື ນິຕິບຸກຄົນ ທີ່ຈຳໜ່າຍ ແລະນຳໃຊ້ຊີມກາດໂທລະສັບແບບຕື່ມເງິນໃນທົ່ວປະເທດ.

## ໝວດທີ 2
## ການອະນຸຍາດ ແລະການຂຶ້ນທະບຽນນຳໃຊ້ຊີມກາດໂທລະສັບແບບຕື່ມເງິນ

**ມາດຕາ 7. ການອະນຸຍາດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງເປັນຕົວແທນຈຳໜ່າຍຊີມກາດໂທລະສັບແບບຕື່ມເງິນ ຕ້ອງເຮັດສັນຍາກັບ ບັນດາບໍລິສັດຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມໃດໜຶ່ງ ທີ່ຕົນຈະເປັນຕົວແທນຈຳໜ່າຍ ແລະຕ້ອງໄດ້ຮັບອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມຈາກ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານແຂວງ/ນະຄອນຫຼວງ.

**ມາດຕາ 8. ການຂຶ້ນທະບຽນນຳໃຊ້ຊິມກາດໂທລະສັບແບບຕື່ມເງິນ**

ບຸກຄົນ ທີ່ມີຈຸດປະສົງນຳໃຊ້ຊິມກາດໂທລະສັບແບບຕື່ມເງິນ ຕ້ອງໄດ້ຂຶ້ນທະບຽນນຳໃຊ້ ຢູ່ບ່ອນທີ່ຕົນຊື້ຊິມກາດໂທລະສັບແບບຕື່ມເງິນ ເຊັ່ນ: ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື ສາຂາ ຫຼື ຕົວແທນຈຳໜ່າຍ ໂດຍປະກອບເອກະສານໃຫ້ຄົບຖ້ວນ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 9 ຂອງຂໍ້ກຳນົດສະບັບນີ້.

**ມາດຕາ 9. ການປະກອບເອກະສານ**

ການຂຶ້ນທະບຽນນຳໃຊ້ຊິມກາດໂທລະສັບແບບຕື່ມເງິນ, ຜູ້ທີ່ມີຈຸດປະສົງນຳໃຊ້ຊິມກາດໂທລະສັບແບບຕື່ມເງິນ ຕ້ອງນຳ ເອກະສານລຸ່ມນີ້ມາພ້ອມເພື່ອຂຶ້ນທະບຽນໃຫ້ຖືກຕ້ອງ:

1. ບັດປະຈຳຕົວ/ສຳມະໂນຄົວ/ໃບຢັ້ງຢືນທີ່ຢູ່;
2. ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ).

## ໝວດທີ 3
## ການລາຍງານ

**ມາດຕາ 10. ການລາຍງານ**

ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງສະຫຼຸບ ການຂຶ້ນທະບຽນນຳໃຊ້ຊິມກາດໂທລະສັບແບບຕື່ມເງິນ ພ້ອມດ້ວຍປະເພດເອກະສານຢັ້ງຢືນ ຂອງເດືອນຜ່ານມາ ໃຫ້ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ (ກົມໂທລະຄົມມະນາຄົມ) ໃນອາທິດທຳອິດຂອງເດືອນຕໍ່ມາ.

ສາຂາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແຂວງ/ນະຄອນຫຼວງ ແລະຕົວແທນຈຳໜ່າຍຊິມກາດໂທລະສັບແບບຕື່ມເງິນ ຕ້ອງສະຫຼຸບ ການຂຶ້ນທະບຽນນຳໃຊ້ຊິມກາດໂທລະສັບ ແບບຕື່ມເງິນ ຂອງຕົນ ພ້ອມດ້ວຍປະເພດເອກະສານຢັ້ງຢືນ ຂອງເດືອນຜ່ານມາ ໃຫ້ ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ແຂວງ/ນະຄອນຫຼວງ ໃນອາທິດທຳອິດຂອງເດືອນຕໍ່ມາ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 11. ຂໍ້ຫ້າມ**

1. ຫ້າມບຸກຄົນ ຫຼື ນິຕິບຸກຄົນ ຈຳໜ່າຍຊິມກາດໂທລະສັບແບບຕື່ມເງິນ ໂດຍບໍ່ມີໃບອະນຸຍາດ;
2. ຫ້າມຈຳໜ່າຍຊິມກາດໂທລະສັບແບບຕື່ມເງິນ ໂດຍບໍ່ມີການຂຶ້ນທະບຽນນຳໃຊ້ຢ່າງຖືກຕ້ອງ ແລະຄົບຖ້ວນຕາມທີ່ໄດ້ລະບຸໄວ້ໃນມາດຕາ 9 ຂອງ ຂໍ້ກຳນົດສະບັບນີ້;
3. ຫ້າມນຳເຂົ້າ ແລະຈຳໜ່າຍຊິມກາດໂທລະສັບແບບຕື່ມເງິນ ແລະບັດຕື່ມມູນຄ່າໂທຂອງເຄືອຂ່າຍໂທລະຄົມອື່ນ ທີ່ບໍ່ແມ່ນ ຂອງ ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຂອງ ສປປ ລາວ.

## ໝວດທີ 5
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 12. ມາດຕະການຕໍ່ຜູ້ລະເມີດ**

ກໍລະນີ ທີ່ລະເມີດຕໍ່ບົດບັນຍັດໃດໜຶ່ງ ຂອງ ຂໍ້ກຳນົດສະບັບນີ້ ຈະຖືກປະຕິບັດ ດັ່ງນີ້ :

1. ຊິມກາດໂທລະສັບແບບຕື່ມເງິນ ທີ່ບໍ່ໄດ້ຂຶ້ນທະບຽນນຳໃຊ້ຢ່າງຖືກຕ້ອງ ເມື່ອກວດພົບເຫັນ, ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ກ່ຽວຂ້ອງ ຕ້ອງປິດການນຳໃຊ້ໂດຍທັນທີ;
2. ຊິມກາດໂທລະສັບແບບຕື່ມເງິນ ທີ່ບໍ່ໄດ້ຂຶ້ນທະບຽນນຳໃຊ້ຢ່າງຖືກຕ້ອງ ຖ້າຫາກມີບັນຫາເກີດຂຶ້ນໃນທາງທີ່ບໍ່ດີ ຫຼື ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມທີ່ກ່ຽວຂ້ອງ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ;
3. ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ທີ່ບໍລິການຊິມກາດ ໂທລະສັບແບບຕື່ມເງິນ ທີ່ຖືກປິດການນຳໃຊ້ຍ້ອນບໍ່ໄດ້ຂຶ້ນທະບຽນຖືກຕ້ອງ ມາເປີດບໍລິການຄືນໃໝ່ອີກ ໂດຍບໍ່ໄດ້ຂຶ້ນທະບຽນຢ່າງຄົບຖ້ວນ ຕາມມາດຕາ 9 ໃນຂໍ້ກຳນົດສະບັບນີ້ ຈະຖືກປັບໃໝເລກໝາຍລະ 1,000,000 ກີບ(ໜຶ່ງລ້ານກີບຕໍ່ເລກໝາຍ) ແລະຈະຕ້ອງປິດການນຳໃຊ້ເລກໝາຍນັ້ນຢ່າງສິ້ນເຊີງ;
4. ຕົວແທນຈຳໜ່າຍຊິມກາດໂທລະສັບແບບຕື່ມເງິນ ທີ່ຈຳໜ່າຍຊິມກາດໂທລະສັບແບບຕື່ມເງິນ ໂດຍບໍ່ໄດ້ຂຶ້ນທະບຽນນຳໃຊ້ ຢ່າງຄົບຖ້ວນ ຕາມທີ່ລະບຸໄວ້ໃນມາດຕາ 9 ຂອງຂໍ້ກຳນົດສະບັບນີ້ ຈະຖືກຖອນໃບອະນຸຍາດການເປັນຕົວແທນຈຳໜ່າຍຊິມກາດໂທລະສັບແບບຕື່ມເງິນ ຈາກ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ແຂວງ/ນະຄອນຫຼວງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 13. ການຈັດຕັ້ງປະຕິບັດ**

ກົມໂທລະຄົມມະນາຄົມ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ແຂວງ/ນະຄອນຫຼວງ ຮັບຜິດຊອບໃນການຈັດຕັ້ງປະຕິບັດ ຂໍ້ກຳນົດສະບັບນີ້.

**ມາດຕາ 14. ຜົນສັກສິດ**

ຂໍ້ກຳນົດສະບັບນີ້ ມີຜົນສັກສິດ ສາມສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ລັດຖະມົນຕີ

ຫຼຽມ ພົມມະຈັນ